PA

ຫ້ອງການ ຄຄຊ
ວັນທີ 4.7.19
ໂທລະສັບ 021 217770

- ປະຕາ
8/7

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 27 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 03 ກໍລະກົດ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 17-21/06/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,25% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາບໍ່ດີ ເຫັນໄດ້ຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກໃນເດືອນ 6/2019 ຢູ່ລະດັບ 97,90 ຈຸດ ຊຶ່ງຫຼຸດລົງຈາກລະດັບ 100,00 ຈຸດ ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກດຸນງົບປະມານປະຈຳເດືອນ 5/2019 ຂາດດຸນ ເພີ່ມຂຶ້ນ ຈາກຂາດດຸນ 146,80 ຕື້ໂດລາສະຫະລັດໃນເດືອນຜ່ານມາມາເປັນ 207,80 ຕື້ໂດລາສະຫະລັດ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 10-14/06/2019 | ອາທິດນີ້ 17-21/06/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1273 | 1,1301 | -0,25% |
| ເຢນ/ໂດລາ | 108,21 | 107,54 | 0,62% |
| ບາດ/ໂດລາ | 31,160 | 30,870 | 0,94% |
| ເປໂຊ/ໂດລາ | 52,03 | 51,53 | 0,97% |
| ຣູເປີຍ/ໂດລາ | 14.330,00 | 14.160,00 | 1,20% |
| ໂດລາສິງກະໂປ/ໂດລາ | 1,3674 | 1,3580 | 0,69% |
| ຢວນ/ໂດລາ | 6,9259 | 6,8767 | 0,72% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 10,07% ຈາກ 51,95 ໂດລາ/ບາເຣວ ມາເປັນ 57,18 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ 3,11ລ້ານບາເຣວ ໃນອາທິດທີ 14/06/2019 ຈາກເພີ່ມຂຶ້ນ 2,21 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ລາຄານ້ຳມັນຍັງໄດ້ຮັບແຮງກົດດັນຈາກຂໍ້ຂັດແຍ້ງລະຫວ່າງ ສ.ອາເມລິກາ ແລະ ປະເທດອີຣ່ານ ຊຶ່ງເປັນປະເທດທີ່ຜະລິດນ້ຳມັນດິບແຫຼ່ງໜຶ່ງທີ່ສຳຄັນຂອງໂລກ ໂດຍເນື່ອງມາຈາກເຫດການເຮືອຂົນນ້ຳມັນຂອງ ສ.ອາເມລິກາ ຖືກໂຈມຕີໃນເຂດຕາເວັນອອກກາງ ຊຶ່ງ ສ.ອາເມລິກາ ເຊື່ອວ່າເປັນການໂຈມຕີຂອງປະເທດອີຣ່ານ;
- ລາຄາຄຳ ເພີ່ມຂຶ້ນ 2,49% ຈາກ 1.354,50 ໂດລາ/ອອນ ມາເປັນ 1.388,24 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

**2. ສະພາບການຊື້-ຂາຍອັດຕາແລກປ່ຽນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,0001% ແລະ ອ່ອນຄ່າລົງ 1,09% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,29% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 6,55% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 10-14/06/2019 | | | ອາທິດນີ້ 17-21/06/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.715,91 | 8.741,28 | 8.726,98 | 8.714,32 | 8.742,15 | 8.726,97 | 0,02% | -0,01% | 0,0001% | -1,29% | -1,31% | -1,29% |
| ບາດ | 281,22 | 283,15 | 282,59 | 284,76 | 286,31 | 285,70 | -1,24% | -1,10% | -1,09% | -6,52% | -6,58% | -6,55% |

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,21% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,08%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,11% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,40%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (14-20/06/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 26,26 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 52,33 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 26,07 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 247,61 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 236,61 ລ້ານບາດ ແລະ ຂາຍເງິນບາດໄດ້ 484,22 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 67,95% ແລະ ເງິນບາດເພີ່ມຂຶ້ນ 36,65%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,11 ລ້ານໂດລາ ແລະ ເງິນບາດ ຈຳນວນ 70,24 ລ້ານບາດ;

[1] % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 07-13/06/2019 | | ອາທິດນີ້ 14-20/06/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **26,88** | **80,47** | **52,33** | **236,61** | **94,68%** | **194,04%** |
| - ທ/ຄທຸລະກິດລັດ | 8,51 | 25,86 | 11,40 | 32,68 | 33,96% | 26,37% |
| - ທ/ຄທຸລະກິດອື່ນໆ | 18,37 | 54,61 | 40,93 | 203,93 | 122,81% | 273,43% |
| **2. ການຂາຍເງິນຕາຕ່າງປະເທດ** | **19,80** | **443,51** | **26,07** | **484,22** | **31,67%** | **8,09%** |
| - ທ/ຄທຸລະກິດລັດ | 7,80 | 109,01 | 7,26 | 106,32 | -6,92% | -2,47% |
| - ທ/ຄທຸລະກິດອື່ນໆ | 12,00 | 334,50 | 18,81 | 377,90 | 56,75% | 11,54% |
| **ຊື້-ຂາຍສຸດທິ ທທກ** | **7,08** | **-363,04** | **26,26** | **-247,61** | **270,90%** | **-33,12%** |
| - ຜົດຕ່າງຊື້-ຂາຍ | 26,34% | -451,15% | 50,18% | -104,65% | 90,51% | -77,25% |
| - ມູນຄ່າການຊື້-ຂາຍ | 46,68 | 523,98 | **78,40** | **720,83** | **67,95%** | **36,65%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-0,35** | **-7,30** | **0,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,35 | 7,30 | 0,00 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **0,67** | **17,77** | **3,11** | **70,24** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-5,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 5,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 06/2019 ຄາດວ່າຈະຢູ່ໃນລະດັບ 2,84%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (13-20/06/2019) ຈຳນວນ 62,06 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼເຂົ້າມີຈຳນວນ 406,93 ລ້ານໂດລາ (ສ່ວນໃຫຍ່ແມ່ນຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດຈຳນວນ 155,61 ລ້ານໂດລາ, ທະນາຄານທຸລະກິດຮັບເງິນກູ້ຢືມຈາກຕ່າງປະເທດຈຳນວນ 100 ລ້ານໂດລາ, ຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 68,34 ລ້ານໂດລາ ແລະ ຮັບເງິນກູ້ຢືມຂອງຫົວໜ່ວຍທຸລະກິດຈຳນວນ 63,69 ລ້ານໂດລາ). ສ່ວນກະແສເງິນໄຫຼອອກມີຈຳນວນ 344,87 ລ້ານໂດລາ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 120,69 ລ້ານໂດລາ, ຖອນເງິນ ຫຼື ໂອນເງິນໄປຝາກຢູ່ຕ່າງປະເທດ ຈຳນວນ 155,56 ລ້ານໂດລາ, ຊຳລະເງິນກູ້ຢືມຂອງທະນາຄານທຸລະກິດ ຈຳນວນ 32,00 ລ້ານໂດລາ ແລະ ລາຍຈ່າຍອື່ນໆ ຈຳນວນ 35,84 ລ້ານໂດລາ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 672 ສະບັບທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 140 ສະບັບ, ລວມມູນຄ່າໂອນທັງໝົດ 284,25 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 100,20 ຕື້ກີບເທົ່າກັບ 54,44%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-21/06/2019) ມີທັງໝົດ 4.298 ຄັ້ງຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ເພີ່ມຂຶ້ນ 723 ຄັ້ງ, ລວມມູນຄ່າໂອນທັງໝົດ 1.661,01 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ເພີ່ມຂຶ້ນ 411,95 ຕື້ກີບ ຫຼື ເທົ່າກັບ 32,98%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈໍານວນ 62 ຄັ້ງ, ລວມມູນຄ່າໂອນທັງໝົດ 122,16 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 37,48 ຕື້ກີບ ເທົ່າກັບ 23%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 806,28 ຈຸດ ຫຼຸດລົງ ຈາກ 810,10 ຈຸດ ຫຼື ເທົ່າກັບ 0,47% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 352.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,06 ຕື້ກວ່າກີບ ເພີ່ມຂຶ້ນ 34,11% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 65,13% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL, VCL ແລະ LAT.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ (07-13/06/2019) | | | ອາທິດນີ້ (14-20/06/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈໍານວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| BCEL | 201.900 | 1.249.745.000 | 6.200 | 321.500 | 1.958.285.000 | 6.150 | 59,24 | 56,69 | -0,81 |
| EDL-GEN | 53.500 | 209.626.000 | 3.900 | 21.400 | 83.641.000 | 3.930 | -60 | -60,10 | 0,77 |
| LWPC | - | - | 7.150 | - | - | 7.150 | - | - | - |
| PTL | 100 | 100.000 | 1.000 | - | - | 730 | -100 | -100 | -27,00 |
| SVN | 2.900 | 6.190.000 | 2.100 | - | - | 2.100 | -100 | -100 | - |
| PCD | 1.100 | 1.011.000 | 1.010 | - | - | 1.000 | -100 | -100 | -0,99 |
| LCC | 16.400 | 35.260.000 | 2.150 | - | - | 2.150 | -100 | -100 | - |
| MHTL | 11.900 | 35.644.000 | 3.000 | 6.600 | 19.285.000 | 3.000 | -44,54 | -45,90 | - |
| LAT | 400 | 308.000 | 770 | 1.700 | 1.289.000 | 750 | 325 | 318,51 | -2,60 |
| VCL | 600 | 750.000 | 1.200 | 900 | 990.000 | 1.100 | 50 | 32 | -8,33 |
| ທັງໝົດ | 288.800 | 1.538.634.000 | | 352.100 | 2.063.490.000 | | 21,92 | 34,11 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈໍາເປັນຈໍານວນໜຶ່ງເປັນຕົ້ນ: ❶ກອງປະຊຸມກະກຽມກອງປະຊຸມວຽກງານພັດທະນາຊົນນະບົດ ແລະ ເປີດຂະບວນການຍ້ອງຍໍ; ❷ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າເນື້ອໃນລາຍງານການເມືອງຂີງເຂດເສດຖະກິດ ແລະ ❸ກອງປະຊຸມຄະນະກໍາມະການເປີດເສລີການບໍລິການທາງດ້ານການເງິນ ຄັ້ງທີ 63 ຢູ່ປະເທດອິນໂດເນເຊຍ.
- ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສໍາຄັນ ແລະ ວຽກງານປົ່ນອ້ອມຈໍານວນໜຶ່ງເປັນຕົ້ນ: ❶ກອງປະຊຸມທາບທາມຄໍາເຫັນຕໍ່ຮ່າງດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ທຫລ; ❷ກອງປະຊຸມ

ເປີດກວ້າງທາບທາມຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງ; ❸ກອງປະຊຸມຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະໄໝສາມັນຄັ້ງທີ I ປະຈຳປີ 2019; ❹ກອງປະຊຸມກ່ຽວກັບການສ້າງ QR Code ສຳລັບລະບົບການຊຳລະ; ❺ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນໃນຫົວຂໍ້: "ການລະດົມທຶນຈາກມວນຊົນ ແລະ ຈົດທະບຽນໃນ ຕລຊລ"; ❻ກອງປະຊຸມຄົ້ນຄວ້າກວດກາ ແລະ ຕິດຕາມຄວາມພ້ອມໂຄງການກໍ່ສ້າງຮ້ານອາຫານຂອງສະຖາບັນການທະນາຄານ; ❼ກອງປະຊຸມສະຫຼຸບຜົນການເຮັດວຽກລະຫວ່າງທະນາຄານສົ່ງເສີມກະສິກຳ ແລະ ຄະນະຊ່ຽວຊານຈາກ ສສ ຫວຽດນາມ; ❽ກອງປະຊຸມສຳມະນາຫົວຂໍ້: "ບົດຮຽນການສ້າງມາດຕະຖານ QR Code ຂອງປະເທດໄທ" ແລະ ❾ພິທີການແຂ່ງຂັນກິລາມິດຕະພາບລະຫວ່າງ ທຫລ ແລະ ທະນາ ຄານແຫ່ງປະເທດໄທຄັ້ງທີ 14 ແລະ ພິທີລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຄຸ້ມຄອງທະນາຄານທຸລະກິດລະຫວ່າງທະນາຄານກາງທັງສອງປະເທດ.

- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ສຳເລັດການລົງກວດກາລະບົບຄຸ້ມຄອງການບໍລິການຮັບຊຳລະ Alipay ຂອງທະນາຄານພັດທະນາລາວ ແລະ ລົງກວດກາທະນາຄານຫຸ້ນສ່ວນການຄ້າທະຫານ ສາຂາລາວ ປະຈຳປີ 2018; ❷ເຜີຍແຜ່ກົດໝາຍວ່າດ້ວຍລະບົບການຊຳລະ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດສະບັບພາສາອັງກິດລົງເວັບໄຊ ທຫລ; ❸ລົງຕິດຕາມ, ກວດກາ ແລະ ຈັດລຳດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຢູ່ທະນາຄານແຄນາເດຍ; ❹ເຫັນດີອະນຸມັດການຂໍນຳໃຊ້ທຶນຈົດທະບຽນຈຳນວນ 01 ແຫ່ງຄື: ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ ແລະ ❺ລົງກວດກາສະຖາບັນການເງິນປະຈຳປີ 2018 ຈຳນວນທັງໝົດ 02 ແຫ່ງ ຄື: ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໄພສານລານຊ້າງ ແລະ ອຸດົມເອກ.
- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**❶ເອກອັກຄະລັດຖະທູດແຫ່ງສະຫະລັດອິນເດຍ ປະຈຳ ສປປ ລາວ; ❷ເອກອັກຄະລັດຖະທູດອັງກິດ ປະຈຳ ສປປ ລາວ; ❸ຄະນະຊ່ຽວຊານຈາກທະນາຄານແຫ່ງລັດຫວຽດນາມ; ❹ **AgriBank** ຈາກ ສສ ຫວຽດນາມ ກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນໃນ ສປປ ລາວ (KFW) ແລະ ❺ຄະນະກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນໃນ ສປປ ລາວ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII; ❷ກອງປະຊຸມລັດຖະບານເປີດກວ້າງຄັ້ງທີ I ປະຈຳປີ 2019; ❸ກອງປະຊຸມວິທະຍາສາດດ້ານສະຖິຕິໃນຫົວຂໍ້: "ການພັດທະນາຕົວຊີ້ບອກລະດັບຊາດ ເພື່ອເຊື່ອມໂຍງເປົ້າໝາຍການພັດທະນາແບບຍືນຍົງ 2030"; ❹ກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນຄັ້ງທີ I ປະຈຳປີ 2019; ❺ພິທີເປີດງານວາງສະແດງສິນຄ້າ Lao Information Communication and Technology (ICT) Expo 2019 ຢູ່ໂຮງແຮມດອນຈັນພາເລດ ແລະ ❻ກອງປະຊຸມສຳມະນາ "2019 Overview Course of Financial Sector Issus-Financial Sector in the Bali of Data and Technology" ຢູ່ປະເທດ ສ. ອາເມລິກາ.

- **ທຫລ ກະກຽມຈັດກອງປະຊຸມ, ສໍາມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມແນະນໍາການຈັດຕັ້ງປະຕິບັດແຜນກໍານົດພະນັກງານນໍາພາ-ຄຸ້ມຄອງຂັ້ນຄະນະພັກ ທຫລ ຄຸ້ມຄອງ; ❷ກອງປະຊຸມຄົ້ນຄວ້າກະກຽມການເຂົ້າຮ່ວມກອງປະຊຸມວິຊາການຄຸນໜີງ; ❸ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງຕ່າງໆຂອງສໍານັກງານປົກປ້ອງເງິນຝາກ; ❹ກອງປະຊຸມສະພາບໍລິຫານສະຖາບັນການທະນາຄານສະໄໝສາມັນຄັ້ງທີ່ I ປະຈໍາປີ 2019; ❺ກອງປະຊຸມສໍາມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃນຫົວຂໍ້: "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ"; ❻ກອງປະຊຸມສໍາມະນາໃນຫົວຂໍ້ "ການພັດທະນາຕະຫຼາດເງິນ (Money Market Development) ລະຫວ່າງທະນາຄານກາງ ສ.ເກົາຫຼີ ແລະ ທຫລ ແລະ ❼ພິທີເຊັນສັນຍາບົດບັນທຶກຄວາມເຂົ້າໃຈຮ່ວມກັນ (MoU) ລະຫວ່າງສໍານັກງານປົກປ້ອງເງິນຝາກ ແລະ ກົມຄຸ້ມຄອງທະນາຄານທຸລະກິດ. ພ້ອມກັນນັ້ນ, ຊາວໜຸມ ທຫລ ຍັງໄດ້ສ້າງຂະບວນການດ້ານວິຊາສະເພາະຂອງຊາວໜຸ່ມຮາກຖານ ທຫລ ໂດຍການຈັດສໍາມະນາພາຍໃຕ້ຫົວຂໍ້: "ແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ".
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**❶ຜູ້ຕາງໜ້າຫ້ອງການ IMF ປະຈໍາ ສປປ ລາວ ແລະ ສສ ຫວຽດນາມ. ພ້ອມກັນນັ້ນ, ທຫລ ກໍຍັງກະກຽມຕ້ອນຮັບ ແລະ ❷ຄະນະຜູ້ຕາງໜ້າຈາກທະນາຄານກາງ ສ. ເກົາຫຼີ (BOK-KPP).

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ